# ປະກາດຮັບສະໝັກງານ
## ພະນັກງານຊ່ວຍວຽກກອງເລຂາຂອງຄະນະກຳມະການສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ຢູ່ໃນຂັ້ນແຂວງ
## ກະຊວງສາທາລະນະສຸກ, ສປປ ລາວ

ການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນປະຕິບັດງານສຳລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ປີ 2016-2025 ແມ່ນໄດ້ຮັບການສະໜັບສະໜູນສ່ວນໜຶ່ງຈາກແຜນງານຮ່ວມຂອງອົງການສະຫະປະຊາຊາດ ກ່ຽວກັບສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ (UNJP RMNCH) ປີ 2017-2020. ແຜນງານ UNJP RMNCH ມີຈຸດປະສົງເປົ້າໝາຍເພື່ອປັບປຸງ ສຸຂະພາບຂອງແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ ໃນ ສ.ປ.ປ.ລາວ ໂດຍການ ສະໜັບສະໜູນໃນລະດັບນະໂຍບາຍ, ການຖ່າຍທອດຄວາມຮູ້, ແລະ ການຈັດຕັ້ງປະຕິບັດໃນລະດັບທ້ອງຖິ່ນ ເພື່ອຜັນຂະຫຍາຍບັນດາ ນະໂຍບາຍ ແລະ ທົດລອງນຳໃຊ້ບັນດາຄູ່ມື, ເຄື່ອງມື ແລະ ວິທີການຕ່າງໆ ເພື່ອໃຫ້ໄດ້ຜົນໄດ້ຮັບທີ່ດີ ແລະ ບົດຮຽນທີ່ຖອດຖອນໄດ້ສາມາດເອົາໄປນຳໃຊ້ໃນທົ່ວປະເທດ.

ກະຊວງສາທາລະນະສຸກ, ກົມອະນາໄມ-ສົ່ງເສີມສຸຂະພາບ, ສູນສຸຂະພາບແມ່ ແລະ ເດັກ ມີຄວາມຕ້ອງການ ຮັບສະໝັກພະນັກງານຄົນລາວ ຜູ້ທີ່ມີຄວາມຮູ້ ແລະ ປະສົບການ 2 ຕຳແໜ່ງ ເພື່ອມາຊ່ວຍວຽກກອງເລຂາຂອງຄະນະກຳມະການສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ຢູ່ແຂວງບໍ່ແກ້ວ ແລະ ແຂວງສະຫວັນນະເຂດ. ບົດບາດໜ້າທີ່ຂອງພະນັກງານຊ່ວຍວຽກກອງເລຂາໃນຂັ້ນແຂວງນີ້ ແມ່ນ ເພື່ອຊ່ວຍໃນການຈັດຕັ້ງປະຕິບັດ ຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານສຳລັບການບໍລິການແບບເຊື່ອມສານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ຢູ່ໃນຂັ້ນແຂວງ ແລະ ເມືອງ.

**ໜ້າວຽກ ແລະ ໜ້າທີ່ຮັບຜິດຊອບ:**

- ຊ່ວຍກອງເລຂາຂອງຄະນະກຳມະການສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ໃນຂັ້ນແຂວງໃນການວາງແຜນ, ຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ປະສານງານສຳລັບວຽກງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍໃນຂັ້ນແຂວງ ແລະ ຂັ້ນເມືອງ;
- ຮັບປະກັນໃຫ້ທຸກກິດຈະກຳຂອງຂັ້ນແຂວງໄດ້ຮັບການຈັດຕັ້ງປະຕິບັດ ໂດຍອີງຕາມຍຸດທະສາດແຫ່ງຊາດ ແລະ ແຜນປະຕິບັດງານການບໍລິການສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍແບບເຊື່ອມສານ ແລະ ຖືກບັນຈຸເຂົ້າໃນແຜນວຽກ ແລະ ແຜນງົບປະມານຂອງສາທາລະນະສຸກແຂວງ;
- ຊ່ວຍທີມງານສາທາລະນະສຸກແຂວງເພື່ອຮັບປະກັນໃຫ້ມີການຈັດຕັ້ງປະຕິບັດແຜນງານຕາມແນວທາງວິທີການທີ່ເປັນມາດຕະຖານ;
- ຊ່ວຍກອງເລຂາຂອງຄະນະກຳມະການສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ໃນຂັ້ນແຂວງ ໃນການເກັບກຳຂໍ້ມູນ, ວິເຄາະ ແລະ ລາຍງານ;
- ຊ່ວຍເຫລືອດ້ານວິຊາການໃນການສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສາທາລະນະສຸກ, ຮັບປະກັນການຈັດຕັ້ງປະຕິບັດແຜນງານຮ່ວມຂອງອົງການສະຫະປະຊາຊາດ ສອດຄ່ອງກົມກຽວກັບການຈັດຕັ້ງປະຕິບັດແຜນວຽກຂອງສາທາລະນະສຸກແຂວງ;
- ຊ່ວຍເຮັດໃຫ້ກຸ່ມວິຊາການດ້ານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ (RMNCH TWG) ໃນຂັ້ນແຂວງມີການເຄື່ອນໄຫວປົກກະຕິ.

**ລະດັບວິຊາສະເພາະ ແລະ ປະສົບການ:**

- ເປັນຜູ້ທີ່ມີຄວາມຮູ້ວິຊາການດ້ານສາທາລະນະສຸກສາດ, ໂດຍສະເພາະເປັນແພດຊັ້ນສູງ, ຫລື ມີຄວາມຮູ້ວິຊາການດ້ານສາທາລະນະສຸກອື່ນໆທີ່ກ່ຽວຂ້ອງ.
- ມີປະສົບການໃນການເຮັດວຽກຢ່າງໜ້ອຍ 3 ປີ ກ່ຽວກັບການຄຸ້ມຄອງບໍລິຫານວຽກງານສາທາລະນະສຸກ ຢູ່ໃນຂັ້ນແຂວງ ແລະ ຂັ້ນເມືອງ, ໂດຍສະເພາະໃນຂົງເຂດວຽກງານສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ.

ເພື່ອສະໝັກຕຳແໜ່ງງານນີ້, ກະລຸນາສົ່ງ CV ແລະ ຈົດໝາຍສະໝັກງານທີ່ອະທິບາຍກ່ຽວກັບຄວາມສົນໃຈ ແລະ ລະດັບວິຊາສະເພາະຂອງທ່ານ ພ້ອມທັງບອກຕຳແໜ່ງງານທີ່ທ່ານຕ້ອງການສະໝັກ ໄປໃຫ້:

**ດຣ. ປະນອມ ໄຊຍະມຸງຄູນ ແລະ ດຣ. ຈັນຄຳ ເຕັ່ງເບຍຈື**
ກະຊວງສາທາລະນະສຸກ, ກົມອານາໄມ-ສົ່ງເສີມສຸຂະພາບ, ສູນສຸຂະພາບແມ່ ແລະ ເດັກ
ອີເມວ: pamnchtwg@gmail.com; Chankham.tbc1979@gmail.com
ໂທລະສັບ: +856 21 452519

ປິດຮັບສະໝັກ: **ວັນອັງຄານ, ວັນທີ 31 ເດືອນ ຕຸລາ 2017**